ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 69 ສປປ

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍນາຍທະຫານ**
**ກອງທັບປະຊາຊົນລາວ.**

~~~~~~~~~~~~~~

- ອີງຕາມລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67, ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດ ໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 07/ສພຊ, ລົງວັນທີ 22 ຕຸລາ 2004 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 23/ຄປຈ,ລົງວັນທີ 10 ພະຈິກ 2004.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :

*ມາດຕາ 1* : ປະກາດໃຊ້ກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນ.

*ມາດຕາ 2* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 15 ພະຈິກ 2004.

ປະທານປະເທດ ແຫ່ງ ສປປລາວ

ຄຳໄຕ ສີພັນດອນ.
~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 07 /ສພຊ

# ມະຕິຕົກລົງ
## ຂອງ
## ສະພາແຫ່ງຊາດ ແຫ່ງ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.
- ອີງຕາມການສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ 31/ທສນຍ.ລຂ, ລົງວັນທີ 04/06/2004.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ V ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ໃນວາລະປະຊຸມຕອນເຊົ້າຂອງວັນທີ 22 ຕຸລາ 2004;

## ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u>. ຮັບຮອງເອົາກົດໝາຍວ່າດ້ວຍ ນາຍທະຫານກອງທັບປະຊາຊົນລາວ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ.

<u>ມາດຕາ 2</u>. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 22 ຕຸລາ 2004
ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------

ສະພາແຫ່ງຊາດ

ເລກທີ 07/ ສພຊ

ນະຄອນຫລວງວຽງຈັນ, ວັນທີ 22 ຕຸລາ 2004

# ກົດໝາຍ

# ວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວກຳນົດທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ຄວາມຮັບຜິດຊອບ, ພັນທະ, ການພົວພັນຮ່ວມມືສາກົນ, ມາດຕະຖານ, ຂັ້ນ, ຊັ້ນ ແລະ ຕຳແໜ່ງຂອງນາຍທະຫານ; ກຳນົດການຄຸ້ມຄອງຂອງລັດ, ນະໂຍບາຍ, ຂໍ້ຫ້າມ, ການຍ້ອງຍໍ ແລະ ການປະຕິບັດວິໄນ ຕໍ່ນາຍທະຫານໃນກອງທັບປະຊາຊົນລາວ, ເຮັດໃຫ້ນາຍທະຫານມີຄວາມໜັກແໜ້ນທາງດ້ານການເມືອງ, ແນວຄິດ, ເຂັ້ມແຂງດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ມີແບບແຜນທັນສະໄໝ ແລະເຮັດສຳເລັດໜ້າທີ່ອັນມີກຽດສະຫງ່າຂອງຕົນ.

**ມາດຕາ 2. ນາຍທະຫານກອງທັບປະຊາຊົນລາວ**

ນາຍທະຫານກອງທັບປະຊາຊົນລາວແມ່ນພະນັກງານຂອງພັກ ແລະລັດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ມີຊັ້ນ ແຕ່ຊັ້ນຮ້ອຍຕີ ເຖິງຊັ້ນພົນເອກ ຊຶ່ງມີເຄື່ອງໝາຍຊັ້ນ, ທຽບຊັ້ນ, ເຄື່ອງໝາຍເຫລົ່າຮົບ, ເຫລົ່າທັບ ແລະເຄື່ອງແບບສະເພາະ ໂດຍແມ່ນລັດຖະບານເປັນຜູ້ກຳນົດ.

**ມາດຕາ 3. ທີ່ຕັ້ງ, ພາລະບົດບາດຂອງນາຍທະຫານ**

ນາຍທະຫານເປັນກຳລັງຫລັກແຫລ່ງຂອງກອງທັບປະຊາຊົນລາວ.

ນາຍທະຫານມີພາລະບົດບາດ ຊີ້ນຳ, ນຳພາ, ບັນຊາ ແລະກໍ່ສ້າງກຳລັງ, ສຶກສາອົບຮົມ, ຝຶກແອບຮ່ຳຮຽນ, ກຽມພ້ອມສູ້ຮົບ, ສູ້ຮົບ, ຄຸ້ມຄອງ, ລ້ຽງດູທັບ ແລະປະຕິບັດໜ້າທີ່ອື່ນໆ ເພື່ອປົກປັກຮັກສາຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ແລະສ້າງສາພັດທະນາປະເທດຊາດ.

**ມາດຕາ 4. ສິດ ແລະໜ້າທີ່ຂອງນາຍທະຫານ**

ສິດ ແລະໜ້າທີ່ຂອງນາຍທະຫານ ມີດັ່ງນີ້:

1. ກຽມພ້ອມສູ້ຮົບ ແລະສູ້ຮົບພິລະອາດຫານ ເພື່ອປົກປັກຮັກສາປະເທດຊາດ, ຮັບປະກັນສະຖຽນລະພາບ ແລະຄວາມໝັ້ນຄົງຂອງລະບອບປະຊາທິປະໄຕປະຊາຊົນ; ປົກປັກຮັກສາຊັບສິນບັດຂອງລັດ, ສິດຜົນປະໂຫຍດອັນຊອບທຳຂອງລວມໝູ່ ແລະຂອງປະຊາຊົນ;
2. ຕັ້ງໜ້າປັບປຸງແລະກໍ່ສ້າງກຳລັງໃຫ້ໜັກແໜ້ນທາງດ້ານການເມືອງ, ແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ມີທາດແທ້ປະຕິວັດ, ມີລະບຽບວິໄນເຂັ້ມງວດ ແລະມີແບບແຜນທັນສະໄໝ; ມີລະດັບວິທະຍາສາດ, ເຕັກນິກ, ສິລະປະຍຸດ, ຍຸດທະວິທີໃນການສູ້ຮົບ ແລະມີຄວາມສາມາດປະຕິບັດສຳເລັດໜ້າທີ່;
3. ປະຕິບັດແນວທາງ, ນະໂຍບາຍຂອງພັກ, ກົດໝາຍຂອງລັດ, ຂໍ້ກຳນົດ, ກົດລະບຽບຂອງກອງທັບ; ຮັກສາຄວາມລັບຂອງລັດ, ຂອງກອງທັບຢ່າງເດັດຂາດ; ປະຕິບັດຄຳສັ່ງຂອງຜູ້ນຳພາ, ບັນຊາ ແລະການຈັດຕັ້ງຂັ້ນເທິງຂອງຕົນຢ່າງເຂັ້ມງວດ;
4. ກໍ່ສ້າງຮາກຖານການເມືອງ, ເຂົ້າຮ່ວມການພັດທະນາທາງດ້ານເສດຖະກິດ, ວັດທະນະທຳ, ສັງຄົມ ແລະຊ່ວຍເຫລືອປະຊາຊົນ;
5. ຄຸ້ມຄອງຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈຂອງນາຍ ແລະພົນທະຫານບົນພື້ນຖານຍົກສູງຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ, ອອກແຮງສ້າງພະລາທິການກັບທີ່ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງຕົນ;
6. ປະຕິບັດຫລັກການລວມສູນປະຊາທິປະໄຕ; ມີຄວາມສາມັກຄີເປັນເອກະພາບພາຍໃນກອງທັບ, ຕຳນິຕິຊົມ, ຊ່ວຍເຫລືອຊຶ່ງກັນແລະກັນຢູ່ພາຍໃນກົມກອງ ແລະລະຫວ່າງຂັ້ນລຸ່ມ ກັບຂັ້ນເທິງ ເພື່ອພ້ອມກັນກ້າວໜ້າ.

### ມາດຕາ 5. ຄວາມຮັບຜິດຊອບຂອງນາຍທະຫານ

ນາຍທະຫານ ມີຄວາມຮັບຜິດຊອບ ຊີ້ນຳ, ນຳພາ, ບັນຊາ, ຄຸ້ມຄອງກົມກອງຂອງຕົນ, ປະຕິບັດແນວທາງ, ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິ, ຄຳສັ່ງຂອງຂັ້ນເທິງຢ່າງເຂັ້ມງວດ ແລະມີຄວາມຮັບຜິດຊອບຕໍ່ຄຳສັ່ງຂອງຕົນ.

ການປະຕິບັດຄຳສັ່ງຂອງຜູ້ບັນຊາໃນຍາມສູ້ຮົບ ຕ້ອງປະຕິບັດຢ່າງເຂັ້ມງວດ ແລະເດັດຂາດ.

### ມາດຕາ 6. ພັນທະຂອງນາຍທະຫານ

ນາຍທະຫານມີພັນທະ ດັ່ງລຸ່ມນີ້:

1. ກຽມພ້ອມສູ້ຮົບ, ສູ້ຮົບພິລະອາດຫານ, ຍອມເສຍສະຫລະຊີວິດ ເພື່ອຜົນປະໂຫຍດຂອງປະເທດຊາດ ແລະຂອງປະຊາຊົນບັນດາເຜົ່າ;
2. ປົກປັກຮັກສາພັກປະຊາຊົນປະຕິວັດລາວ ແລະລັດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເຂົ້າຮ່ວມໃນການສ້າງສາພັດທະນາປະເທດຊາດ;
3. ຝຶກຝົນ, ຫລໍ່ຫລອມຄຸນສົມບັດສົນທຳປະຕິວັດ, ເປັນແບບຢ່າງໃນທຸກວຽກງານ; ຝຶກແອບຮ່ຳຮຽນ, ຍົກສູງລະດັບຄວາມຮູ້ ຄວາມສາມາດທາງດ້ານການເມືອງ, ການທະຫານ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະວິຊາສະເພາະອື່ນໆ ເພື່ອເຮັດສຳເລັດໜ້າທີ່ ທີ່ໄດ້ຮັບມອບໝາຍ;
4. ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ, ປະຕິບັດຄຳສັ່ງຂອງຜູ້ບັນຊາຢ່າງເຂັ້ມງວດ ແລະເດັດຂາດ;
5. ເຄົາລົບນັບຖືຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ.

ນອກຈາກນີ້ແລ້ວ ນາຍທະຫານກໍຍັງມີພັນທະຄືກັນກັບພົນລະເມືອງລາວ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍແຫ່ງ ສປປລາວ.

### ມາດຕາ 7. ການພົວພັນ ແລະຮ່ວມມືສາກົນ ຂອງນາຍທະຫານ

ນາຍທະຫານກອງທັບປະຊາຊົນລາວ ພົວພັນຮ່ວມມືກັບກອງທັບຂອງບັນດາປະເທດເພື່ອນມິດ ແລະປະເທດອື່ນໆຕາມລະບຽບການ ບົນພື້ນຖານຫລັກການຢູ່ຮ່ວມກັນໂດຍສັນຕິ, ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ແລະຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

# ໝວດທີ II
## ປະເພດ, ແຫລ່ງທີ່ມາ, ມາດຕະຖານ, ການນຳພາ, ບັນຊາ ແລະກໍ່ສ້າງນາຍທະຫານ

**ມາດຕາ 8. ປະເພດນາຍທະຫານ**

ນາຍທະຫານກອງທັບປະຊາຊົນລາວ ປະກອບມີປະເພດດັ່ງນີ້:

1. ນາຍທະຫານເສນາທິການ ເຮັດໜ້າທີ່ບັນຊາ, ສູ້ຮົບ ແລະກໍ່ສ້າງກຳລັງທາງດ້ານການທະຫານ;
2. ນາຍທະຫານການເມືອງ ເຮັດໜ້າທີ່ວຽກງານການເມືອງ, ແນວຄິດ, ວຽກງານຈັດຕັ້ງພັກ, ພະນັກງານ, ວຽກງານນະໂຍບາຍ ແລະວຽກງານອົງການຈັດຕັ້ງມະຫາຊົນ;
3. ນາຍທະຫານພະລາທິການ ເຮັດໜ້າທີ່ຮັບປະກັນດ້ານພະລາທິການ ແລະການລ້ຽງດູທັບ;
4. ນາຍທະຫານ ເຕັກນິກ, ວິຊາການ ແລະວິຊາສະເພາະອື່ນໆ ເຮັດໜ້າທີ່ຂະແໜງການ ແລະວິຊາສະເພາະໃດໜຶ່ງ.

**ມາດຕາ 9. ແຫລ່ງທີ່ມາຂອງນາຍທະຫານ**

ແຫລ່ງທີ່ມາຂອງນາຍທະຫານ ມີດັ່ງນີ້:

1. ນາຍສິບທີ່ຮຽນຈົບຈາກບັນດາໂຮງຮຽນຊັ້ນກາງຂຶ້ນໄປຢູ່ໃນແລະນອກກອງທັບ, ທັງພາຍໃນ ແລະຕ່າງປະເທດ;
2. ນາຍສິບ ຈາກກົມກອງຕ່າງໆ ຊຶ່ງເປັນຜູ້ສູ້ຮົບພິລະອາດຫານ; ຫ້າວຫັນ ແລະມີຜົນງານດີເດັ່ນໃນການປະຕິບັດໜ້າທີ່ວຽກງານຕ່າງໆ;
3. ພະນັກງານ, ລັດຖະກອນ ແລະນັກສຶກສານອກກອງທັບ ທີ່ຮຽນຈົບຊັ້ນກາງຂຶ້ນໄປທັງພາຍໃນ ແລະຕ່າງປະເທດ ທີ່ເຂົ້າເຮັດໜ້າທີ່ຮັບໃຊ້ໃນກອງທັບ, ຊຶ່ງຕ້ອງໄດ້ຮັບການບຳລຸງ ຫລືກໍ່ສ້າງວິຊາການທະຫານ.

**ມາດຕາ 10. ມາດຕະຖານຂອງນາຍທະຫານ**

ມາດຕະຖານຂອງນາຍທະຫານ ມີດັ່ງນີ້:

1. ຕ້ອງແມ່ນຄົນລາວ ທີ່ເປັນສັນຊາດລາວ, ມີອາຍຸ 21 ປີ ຂຶ້ນໄປ, ມີຊີວະປະຫວັດດີ ແລະບໍ່ຖືກສານຕັດສິນລົງໂທດຕັດອິດສະຫລະພາບມາກ່ອນ;
2. ມີທັດສະນະຫລັກໝັ້ນການເມືອງໜັກແໜ້ນ, ຈຳແນກມິດ-ສັດຕູຈະແຈ້ງ, ມີອຸດົມການສັງຄົມນິຍົມ, ມີຄຸນສົມບັດສິນທຳປະຕິວັດ, ມີນ້ຳໃຈຮັກຊາດ, ຮັກລະບອບປະ

ຊາທິປະໄຕປະຊາຊົນ, ມີຄວາມຈົງຮັກພັກດີຕໍ່ພັກ ແລະປະຊາຊົນ; ມີນ້ຳໃຈຕໍ່ສູ້ເດັດດ່ຽວພິລະອາດຫານ, ມີຄວາມເສຍສະຫລະສູງ ແລະທັນທານໝັ້ນແໜ້ນ;

3. ມີຄວາມຮູ້ພື້ນຖານທິດສະດີມາກ-ເລນິນ, ມີຄວາມສາມາດກຳແໜ້ນ ແລະຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ແລະລະບຽບກົດໝາຍຂອງລັດ;
4. ມີຄວາມຮູ້ເປັນລະບົບກ່ຽວກັບວິຊາການທະຫານ, ວິຊາສະເພາະເຕັກນິກ, ໄດ້ຜ່ານການທົດສອບໃນວຽກງານຕົວຈິງ;
5. ມີສະຕິຕໍ່ການຈັດຕັ້ງ, ປະຕິບັດກົດໝາຍຂອງລັດ ແລະກົດລະບຽບຂອງກອງທັບຢ່າງເຂັ້ມງວດ;
6. ມີສຸຂະພາບສົມບູນ ແລະແຂງແຮງດີ.

ສຳລັບນາຍທະຫານບັນຊາແຕ່ລະຂັ້ນ ຕ້ອງມີເງື່ອນໄຂຕື່ມ ດັ່ງນີ້:

- ຂັ້ນໝວດ, ກອງຮ້ອຍ ແລະທຽບເທົ່າ ຕ້ອງຈົບໂຮງຮຽນນາຍທະຫານບົກ ຫລືທຽບເທົ່າຂຶ້ນໄປ;

- ຂັ້ນກອງພັນນ້ອຍ, ກອງພັນໃຫຍ່ ແລະທຽບເທົ່າ ຕ້ອງຈົບວິທະຍາຄານການທະຫານ, ການເມືອງ ແລະພະລາທິການ ຫລືທຽບເທົ່າຂຶ້ນໄປ;

- ຂັ້ນເຂດທະຫານ, ກອງພົນ ແລະທຽບເທົ່າຂຶ້ນໄປ ຕ້ອງຈົບວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ ຫລື ທຽບເທົ່າຂຶ້ນໄປ.

**ມາດຕາ 11. ການນຳພາ, ບັນຊາ ນາຍທະຫານ**

ນາຍທະຫານກອງທັບປະຊາຊົນລາວ ຢູ່ພາຍໃຕ້ການນຳພາໂດຍກົງ, ລວມສູນເປັນເອກະພາບ ແລະ ຮອບດ້ານຂອງພັກປະຊາຊົນປະຕິວັດລາວ.

ປະທານປະເທດເປັນຜູ້ບັນຊາສູງສຸດ ຂອງນາຍທະຫານກອງທັບປະຊາຊົນລາວ.

ນາຍົກລັດຖະມົນຕີເປັນຜູ້ຈັດຕັ້ງ ແລະ ກວດກາການເຄື່ອນໄຫວຂອງນາຍທະຫານກອງທັບປະຊາຊົນລາວ.

ລັດຖະມົນຕີວ່າການກະຊວງປ້ອງກັນປະເທດເປັນຜູ້ຊີ້ນຳ, ນຳພາ, ບັນຊາ ແລະຄຸ້ມຄອງໂດຍກົງນາຍທະຫານກອງທັບປະຊາຊົນລາວ.

**ມາດຕາ 12. ການກໍ່ສ້າງນາຍທະຫານ**

ການກໍ່ສ້າງນາຍທະຫານແມ່ນຄວາມຮັບຜິດຊອບຂອງພາກສ່ວນຕ່າງໆ ດັ່ງນີ້:

- ຄະນະພັກ, ຄະນະບັນຊາຂັ້ນຕ່າງໆຢູ່ໃນກອງທັບ ມີຄວາມຮັບຜິດຊອບກໍ່ສ້າງນາຍທະຫານທີ່ຂຶ້ນກັບຕົນໃຫ້ເຕີບໃຫຍ່, ເຂັ້ມແຂງ ແລະມີແບບແຜນທັນສະໄໝກ້າວຂຶ້ນຢ່າງບໍ່ຢຸດຢັ້ງ;

- ອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະພົນລະເມືອງລາວທຸກຄົນມີພັນທະປະກອບສ່ວນກໍ່ສ້າງ, ບຳລຸງ ແລະສຶກສາອົບຮົມນາຍທະຫານກອງທັບປະຊາຊົນລາວ.

## ໝວດທີ III
## ລະບົບຂັ້ນ ແລະຊັ້ນ ຂອງນາຍທະຫານ

**ມາດຕາ 13. ຂັ້ນ ແລະຊັ້ນຂອງນາຍທະຫານກອງທັບປະຊາຊົນລາວ**

**ນາຍທະຫານກອງທັບປະຊາຊົນລາວປະກອບມີ ສາມ ຂັ້ນ ແລະ ສິບຊັ້ນ ດັ່ງນີ້:**

ຂັ້ນນາຍຮ້ອຍ, ຂັ້ນນາຍພັນ ແລະຂັ້ນນາຍພົນ.

ຂັ້ນນາຍຮ້ອຍ ມີ ສາມ ຊັ້ນ :

ຊັ້ນ ຮ້ອຍຕີ;
ຊັ້ນ ຮ້ອຍໂທ;
ຊັ້ນ ຮ້ອຍເອກ.

ຂັ້ນນາຍພັນມີ ສາມ ຊັ້ນ:

ຊັ້ນ ພັນຕີ;
ຊັ້ນ ພັນໂທ;
ຊັ້ນ ພັນເອກ.

ຂັ້ນນາຍພົນມີ ສີ່ ຊັ້ນ:

ຊັ້ນພົນຈັດຕະວາ;
ຊັ້ນ ພົນຕີ;
ຊັ້ນ ພົນໂທ;
ຊັ້ນພົນເອກ.

**ມາດຕາ 14. ອາຍຸກະສຽນ ຂອງນາຍທະຫານແຕ່ລະຂັ້ນ.**

**ອາຍຸກະສຽນສູງສຸດ ໃນການປະດັບຊັ້ນ, ເລື່ອນຊັ້ນ, ຕໍ່ນາຍທະຫານປະຈຳການ ແລະບຳນານ ແຕ່ລະຂັ້ນມີດັ່ງນີ້:**

1. **ອາຍຸກະສຽນປະດັບຊັ້ນ ແລະ ເລື່ອນຊັ້ນ.**

ຂັ້ນນາຍຮ້ອຍບໍ່ໃຫ້ເກີນ 40 ປີ;
ຂັ້ນນາຍພັນບໍ່ໃຫ້ເກີນ 50 ປີ;
ຂັ້ນນາຍພົນບໍ່ໃຫ້ເກີນ 60 ປີ.

2. ອາຍຸກະສຽນ ຂອງນາຍທະຫານທີ່ປະຈຳການຢູ່ກົມກອງສູ້ຮົບ ສູງສຸດບໍ່ໃຫ້ເກີນ 55 ປີ, ນາຍທະຫານ ທີ່ປະຈຳການຢູ່ສຳນັກງານ, ອົງການ, ສູງສຸດບໍ່ໃຫ້ເກີນ 65 ປີ.

3. ອາຍຸກະສຽນຮັບບຳນານຂອງນາຍທະຫານ ເພດຊາຍແມ່ນ 60 ປີ ແລະໃນກໍລະນີພິເສດ ທີ່ມີຄວາມຮຽກຮ້ອງຕ້ອງການບໍ່ໃຫ້ເກີນ 65 ປີ, ເພດຍິງແມ່ນ 55 ປີ ແລະໃນກໍລະນີພິເສດທີ່ມີຄວາມຮຽກຮ້ອງຕ້ອງການບໍ່ໃຫ້ເກີນ 60 ປີ. ສຳລັບຜູ້ທີ່ເຮັດວຽກກັບທາດເບື່ອ, ທາດເຄມີ ຫລື ເຮັດວຽກຢູ່ເຂດຫຍຸ້ງຍາກທຸລະກັນດານ 15 ປີ ຢ່າງຕໍ່ເນື່ອງມີສິດໄດ້ຮັບເບັ້ຍບຳນານກ່ອນກຳນົດ.

### ມາດຕາ 15. ການປະດັບຊັ້ນນາຍທະຫານ

ເງື່ອນໄຂປະດັບຊັ້ນນາຍທະຫານ ມີດັ່ງນີ້:

1. ນາຍສິບທີ່ຮຽນຈົບຊັ້ນກາງ ໃນຫລືນອກກອງທັບ ທັງພາຍໃນ ແລະຕ່າງປະເທດຈະໄດ້ຮັບການປະດັບຊັ້ນຮ້ອຍຕີ;
2. ນາຍສິບທີ່ຮຽນຈົບຊັ້ນສູງ ຫລືປະລິນຍາຕີ ໃນ ຫລືນອກກອງທັບ ທັງພາຍໃນ ແລະຕ່າງປະເທດ ຈະໄດ້ຮັບການປະດັບຊັ້ນຮ້ອຍໂທ;
3. ນາຍສິບທີ່ມີຜົນງານດີເດັ່ນໃນການສູ້ຮົບ ຫລືໃນການປະຕິບັດໜ້າທີ່ ວຽກງານອື່ນໆ ຈະໄດ້ຮັບການປະດັບຊັ້ນ ຮ້ອຍຕີ ຫລືຮ້ອຍໂທ ຕາມຄວາມເໝາະສົມ;
4. ພະນັກງານ, ລັດຖະກອນ, ນັກສຶກສາ ນອກກອງທັບ ທີ່ເປັນນັກວິຊາການ, ຮຽນຈົບຊັ້ນ ກາງຂຶ້ນໄປ ທັງພາຍໃນ ແລະຕ່າງປະເທດ ຊຶ່ງເຂົ້າມາເຮັດໜ້າທີ່ຮັບໃຊ້ໃນກອງທັບ ຈະໄດ້ຮັບການປະດັບຊັ້ນຮ້ອຍຕີ ຂຶ້ນໄປ, ແຕ່ຕ້ອງໄດ້ຜ່ານການບຳລຸງ ຫລືກໍ່ສ້າງວິຊາການທະຫານ ຕື່ມອີກ.

### ມາດຕາ 16. ສິດຕົກລົງ ກ່ຽວກັບຊັ້ນນາຍທະຫານ

**ສິດຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ, ປົດຊັ້ນນາຍທະຫານ ມີດັ່ງນີ້:**

1. ປະທານປະເທດເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະປົດຊັ້ນຂັ້ນນາຍພົນ, ຕາມການສະເໜີຂອງນາຍົກລັດຖະມົນຕີ;
2. ນາຍົກລັດຖະມົນຕີເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ ແລະປົດຊັ້ນພັນເອກ; ຕາມການສະເໜີຂອງລັດຖະມົນຕີວ່າການກະຊວງປ້ອງກັນປະເທດ;
3. ລັດຖະມົນຕີວ່າການກະຊວງປ້ອງກັນປະເທດເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ, ປົດຊັ້ນ ຮ້ອຍເອກ, ພັນຕີ ແລະພັນໂທ ຕາມການສະເໜີຂອງຫົວໜ້າກົມໃຫຍ່ການເມືອງກອງທັບ;
4. ຫົວໜ້າກົມໃຫຍ່ການເມືອງກອງທັບເປັນຜູ້ຕົກລົງປະດັບຊັ້ນ, ເລື່ອນຊັ້ນ, ຫຼຸບຊັ້ນ, ປົດຊັ້ນຮ້ອຍຕີ ແລະຮ້ອຍໂທ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ.

**ມາດຕາ 17. ເງື່ອນໄຂເລື່ອນຊັ້ນນາຍທະຫານ**

ການເລື່ອນຊັ້ນນາຍທະຫານ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

1. ເຖິງກຳນົດເວລາພິຈາລະນາການເລື່ອນຊັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້;
2. ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ ຫລືມີຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ;
3. ມີເງື່ອນໄຂ ແລະມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5, 10, 14 ແລະ 20 ຂອງກົດໝາຍສະບັບນີ້.

**ມາດຕາ 18. ກຳນົດເວລາການເລື່ອນຊັ້ນໃຫ້ນາຍທະຫານ**

**ການພິຈາລະນາການເລື່ອນຊັ້ນນາຍທະຫານ ໃຫ້ປະຕິບັດຕາມກຳນົດເວລາ ດັ່ງນີ້:**

| | | | |
|---|---|---|---|
| ຊັ້ນ ຮ້ອຍຕີ ຂຶ້ນ ຮ້ອຍໂທ | ກຳນົດ | 3 | ປີ |
| ຊັ້ນ ຮ້ອຍໂທ ຂຶ້ນ ຮ້ອຍເອກ | ກຳນົດ | 3 | ປີ |
| ຊັ້ນ ຮ້ອຍເອກ ຂຶ້ນ ພັນຕີ | ກຳນົດ | 4 | ປີ |
| ຊັ້ນ ພັນຕີ ຂຶ້ນ ພັນໂທ | ກຳນົດ | 4 | ປີ |
| ຊັ້ນ ພັນໂທ ຂຶ້ນ ພັນເອກ | ກຳນົດ | 4 | ປີ |

ສ່ວນການເລື່ອນຊັ້ນ ພັນເອກ ຂຶ້ນຊັ້ນນາຍພົນ, ນາຍພົນຂຶ້ນນາຍພົນຊັ້ນສູງກວ່ານັ້ນ ບໍ່ມີກຳນົດເວລາ ແມ່ນອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ.

ໄລຍະເວລາທີ່ນາຍທະຫານສຶກສາຢູ່ໂຮງຮຽນຕ່າງໆ ກໍໃຫ້ຄິດໄລ່ໃສ່ກຳນົດເວລາການເລື່ອນຊັ້ນ.

ນາຍທະຫານ ທີ່ມີຜົນງານດີເດັ່ນໃນການສູ້ຣົບ, ໃນການປະຕິບັດໜ້າທີ່ຢູ່ເຂດຫຍຸ້ງຍາກທຸລະກັນດານ ຫລືໜ້າທີ່ພິເສດ ອາດຈະໄດ້ເລື່ອນຂ້າມຊັ້ນ ຫລືເລື່ອນຊັ້ນກ່ອນກຳນົດເວລາ ທີ່ໄດ້ກຳນົດໄວ້.

ໃນກໍລະນີທີ່ຮອດກຳນົດເວລາການເລື່ອນຊັ້ນແລ້ວ ແຕ່ບໍ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງກົດຫມາຍສະບັບນີ້ ຈະບໍ່ທັນໄດ້ເລື່ອນຊັ້ນ, ແຕ່ຈະມີການພິຈາລະນາໄປແຕ່ລະປີ ໂດຍບໍ່ໃຫ້ເກີນໜຶ່ງຮອບຂອງກຳນົດເວລາການເລື່ອນຊັ້ນຂອງແຕ່ລະຊັ້ນ, ຖ້າຫາກບໍ່ໄດ້ເລື່ອນຊັ້ນແລ້ວ ຈະໄດ້ຍົກຂັ້ນເງິນເດືອນຂຶ້ນຫນຶ່ງຊັ້ນ ແລະອາດຈະຍົກຍ້າຍຜູ້ກ່ຽວໄປເຮັດໜ້າທີ່ໃໝ່ຕາມຄວາມສາມາດ ຫລືໃຫ້ຮັບເບັ້ຍບຳນານ ຫລືເງິນອຸດໜູນ ຕາມລະບຽບການ.

ນາຍທະຫານທີ່ຍົກຍ້າຍໄປເຮັດໜ້າທີ່ຢູ່ຝ່າຍພົນລະເຮືອນ ເມື່ອກັບຄືນກອງທັບຈະໄດ້ພິຈາລະນາເລື່ອນຊັ້ນຕື່ມໜຶ່ງຊັ້ນ ຫລືຂ້າມຊັ້ນ ຕາມຄວາມເໝາະສົມ ແຕ່ຕ້ອງມີເງື່ອນໄຂ, ມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍສະບັບນີ້.

## ໝວດທີ IV
## ຕຳແໜ່ງນາຍທະຫານໃນກອງທັບປະຊາຊົນລາວ

**ມາດຕາ 19. ຕຳແໜ່ງຂອງນາຍທະຫານ**

ຕຳແໜ່ງຂອງນາຍທະຫານກອງທັບປະຊາຊົນລາວ ມີດັ່ງນີ້:

1. ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ;
2. ຫົວໜ້າກົມໃຫຍ່ເສນາທິການກອງທັບ, ຫົວໜ້າກົມໃຫຍ່ການເມືອງກອງທັບ, ຫົວໜ້າກົມໃຫຍ່ພະລາທິການກອງທັບ ແລະຫົວໜ້າກົມໃຫຍ່ເຕັກນິກກອງທັບ;
3. ຫົວໜ້າກອງບັນຊາການເຂດທະຫານ;
4. ຫົວໜ້າກົມ, ຫົວໜ້າກອງພົນ, ຫົວໜ້າກອງບັນຊາການທະຫານນະຄອນຫລວງວຽງຈັນ, ຫົວໜ້າກອງບັນຊາການທະຫານນະຄອນ, ຫົວໜ້າກອງບັນຊາການທະຫານແຂວງ;
5. ຫົວໜ້າກອງພັນໃຫຍ່, ຫົວໜ້າກອງບັນຊາການທະຫານເມືອງ;
6. ຫົວໜ້າກອງພັນນ້ອຍ;
7. ຫົວໜ້າກອງຮ້ອຍ;
8. ຫົວໜ້າໝວດ.

ຕຳແໜ່ງຕ່າງໆທີ່ກ່າວມາຂ້າງເທິງນີ້ ມີຕຳແໜ່ງທຽບເທົ່າ ແລະຕຳແໜ່ງຮອງຫົວໜ້າ.

**ມາດຕາ 20. ການກຳນົດຊັ້ນນາຍທະຫານ ໃສ່ແຕ່ລະຕຳແໜ່ງ**

ແຕ່ລະຕຳແໜ່ງ ໄດ້ກຳນົດຊັ້ນນາຍທະຫານໃສ່ ດັ່ງນີ້:

1. ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ: ຊັ້ນ ພົນໂທ ຫລືພົນເອກ;
2. ຫົວໜ້າກົມໃຫຍ່ເສນາທິການກອງທັບ, ຫົວໜ້າກົມໃຫຍ່ການເມືອງກອງທັບ: ຊັ້ນພົນຕີ ຫລືພົນໂທ;
3. ຫົວໜ້າກົມໃຫຍ່ພະລາທິການກອງທັບ, ຫົວໜ້າກົມໃຫ່ຍເຕັກນິກກອງທັບ: ຊັ້ນພົນຈັດຕະວາ ຫລື ພົນຕີ;
4. ຫົວໜ້າຫ້ອງການກະຊວງປ້ອງກັນປະເທດ, ຫົວໜ້າເຂດທະຫານ, ຫົວໜ້າວິທະຍາຄານປ້ອງກັນຊາດໄກສອນ ພົມວິຫານ; ຫົວໜ້າວິທະຍາຄານການທະຫານ, ການເມືອງ, ພະລາທິການ ແລະຫົວໜ້າຂອງອົງການ ກົມກອງທຽບເທົ່າ: ຊັ້ນພົນຈັດຕະວາ ຫລື ພົນຕີ;

5. ຫົວໜ້າກົມ, ຫົວໜ້າໂຮງຮຽນນາຍທະຫານບົກ, ຫົວໜ້າກອງພົນ, ຫົວໜ້າກອງບັນຊາການທະຫານນະຄອນຫລວງວຽງຈັນ, ຫົວໜ້າກອງບັນຊາການທະຫານນະຄອນ ແລະຫົວໜ້າຂອງອົງການ ກົມກອງທຽບເທົ່າ: ຊັ້ນພັນເອກ ຫລື ພົນຈັດຕະວາ;
6. ຫົວໜ້າກອງບັນຊາການທະຫານແຂວງ: ຊັ້ນ ພັນເອກ;
7. ຫົວໜ້າທູດທະຫານ: ຊັ້ນພັນເອກ;
8. ຫົວໜ້າກອງພັນໃຫຍ່ ແລະທຽບເທົ່າ: ຊັ້ນ ພັນໂທ ຫລືພັນເອກ;
9. ຫົວໜ້າພະແນກຂອງອົງການຈັດຕັ້ງຂັ້ນຕ່າງໆ, ຫົວໜ້າກອງບັນຊາການທະຫານເມືອງ: ຊັ້ນພັນຕີ ຫລືພັນໂທ;
10. ຫົວໜ້າກອງພັນນ້ອຍ ແລະທຽບເທົ່າ: ຊັ້ນ ຮ້ອຍເອກ ຫລື ພັນຕີ;
11. ຫົວໜ້າກອງຮ້ອຍ ແລະທຽບເທົ່າ: ຊັ້ນ ຮ້ອຍໂທ ຫລື ຮ້ອຍເອກ;
12. ຫົວໜ້າໝວດ ແລະທຽບເທົ່າ: ຊັ້ນ ຮ້ອຍຕີ ຫລື ຮ້ອຍໂທ.

ຊັ້ນຂອງບັນດາຮອງຫົວໜ້າຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ຈະເທົ່າກັບຊັ້ນຂອງຫົວໜ້າກໍໄດ້.

ຊັ້ນຂອງນາຍທະຫານທີ່ເຮັດວຽກງານພິເສດ, ຢູ່ເຂດຫຍຸ້ງຍາກທຸລະກັນດານ, ກົມກອງເຫລົ່າຮົບເອກະລາດ ແລະດ້ານຮົບຕ່າງໆ ຈະສູງກວ່າຕຳແໜ່ງທີ່ໄດ້ກຳນົດໄວ້ເທິງນີ້ກໍໄດ້ ແຕ່ບໍ່ໃຫ້ກາຍໜຶ່ງຊັ້ນ.

**ມາດຕາ 21. ການແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງນາຍທະຫານ**

ຜູ້ມີສິດຕົກລົງແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງນາຍທະຫານ ມີດັ່ງນີ້:

1. ປະທານປະເທດເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງ ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ພາຍຫລັງທີ່ສະພາແຫ່ງຊາດຮັບຮອງເອົາ;
2. ນາຍົກລັດຖະມົນຕີເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນປະເທດ, ຫົວໜ້າ ແລະຮອງຫົວໜ້າກົມໃຫຍ່, ຫົວໜ້າຫ້ອງການກະຊວງ, ຫົວໜ້າ ແລະຮອງຫົວໜ້າເຂດທະຫານ, ຫົວໜ້າວິທະຍາຄານປ້ອງກັນຊາດໄກສອນ ພົມວິຫານ, ຫົວໜ້າກອງພົນ, ຫົວໜ້າກອງບັນຊາການທະຫານນະຄອນຫລວງວຽງຈັນ, ຫົວໜ້າກອງບັນຊາການທະຫານນະຄອນ, ຫົວໜ້າກອງບັນຊາການທະຫານແຂວງ, ຫົວໜ້າກົມກອງທຽບເທົ່າ ຕາມການສະເໜີຂອງລັດຖະມົນຕີວ່າການກະຊວງປ້ອງກັນປະເທດ;
3. ລັດຖະມົນຕີວ່າການກະຊວງປ້ອງກັນປະເທດເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງຫົວໜ້າ ແລະຮອງຫົວໜ້າກົມ; ຫົວໜ້າທູດທະຫານ, ຮອງຫົວໜ້າຫ້ອງການກະຊວງ, ຮອງຫົວໜ້າວິທະຍາຄານປ້ອງກັນຊາດໄກສອນ ພົມວິຫານ, ຫົວໜ້າ ແລະຮອງຫົວໜ້າວິທະຍາຄານການທະຫານ, ການເມືອງ, ພະລາທິການ; ຫົວໜ້າ

ແລະຮອງຫົວໜ້າ ໂຮງຮຽນນາຍທະຫານບົກ, ຮອງຫົວໜ້າກອງພົນ, ຮອງຫົວໜ້າກອງບັນຊາການທະຫານ ນະຄອນຫຼວງວຽງຈັນ, ຮອງຫົວໜ້າກອງບັນຊາການທະຫານນະຄອນ, ຮອງຫົວໜ້າກອງບັນຊາການທະຫານແຂວງ, ຫົວໜ້າ ແລະຮອງຫົວໜ້າກອງພັນໃຫຍ່, ຫົວໜ້າ ແລະຮອງຫົວໜ້າກອງບັນຊາການທະຫານເມືອງ, ຫົວໜ້າ ແລະຮອງຫົວໜ້າກົມກອງທຽບເທົ່າ ຕາມການສະເໜີຂອງຫົວໜ້າກົມໃຫຍ່ການເມືອງກອງທັບ;

4. ຫົວໜ້າກົມໃຫຍ່ການເມືອງກອງທັບ ເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງ ຫົວໜ້າ ແລະຮອງຫົວໜ້າພະແນກຂອງບັນດາອົງການຂັ້ນຕ່າງໆ, ຫົວໜ້າ ແລະຮອງຫົວໜ້າກອງພັນນ້ອຍ, ຫົວໜ້າແລະຮອງຫົວໜ້າຂະແໜງຂອງກອງພັນໃຫຍ່ເອກະລາດ, ຫົວໜ້າ ແລະ ຮອງຫົວໜ້າກົມກອງທຽບເທົ່າ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ;
5. ຫົວໜ້າກົມໃຫຍ່ເສນາທິການ, ຫົວໜ້າກົມໃຫຍ່ພະລາທິການ, ຫົວໜ້າກົມໃຫຍ່ເຕັກນິກ, ຫົວໜ້າຫ້ອງການກະຊວງ ແລະຫົວໜ້າກົມກອງທຽບເທົ່າເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງຂັ້ນກອງຮ້ອຍ ແລະຂັ້ນຂະແໜງທີ່ຂຶ້ນກັບຕົນ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ;
6. ຫົວໜ້າເຂດທະຫານ, ຫົວໜ້າວິທະຍາຄານປ້ອງກັນຊາດໄກສອນ ພົມວິຫານ; ຫົວໜ້າວິທະຍາຄານການທະຫານ, ການເມືອງ, ພະລາທິການ; ຫົວໜ້າໂຮງຮຽນນາຍທະຫານບົກ, ຫົວໜ້າກອງພົນ, ຫົວໜ້າກອງບັນຊາການທະຫານນະຄອນຫຼວງວຽງຈັນ, ຫົວໜ້າກອງບັນຊາການທະຫານນະຄອນ, ຫົວໜ້າກອງບັນຊາການທະຫານແຂວງ ແລະຫົວໜ້າກົມກອງທຽບເທົ່າເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງຂັ້ນຂະແໜງ, ກອງຮ້ອຍ, ໝວດ, ໝູ່ທີ່ຂຶ້ນກັບຕົນ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ.
7. ຫົວໜ້າກອງພັນໃຫຍ່ເອກະລາດເປັນຜູ້ແຕ່ງຕັ້ງ, ຍົກຍ້າຍ ແລະປົດຕຳແໜ່ງຂັ້ນກອງຮ້ອຍ, ໝວດ ແລະໝູ່ທີ່ຂຶ້ນກັບຕົນ ຕາມການສະເໜີຂອງກົມກອງທີ່ກ່ຽວຂ້ອງ.

**ມາດຕາ 22. ການປົດ ແລະແຕ່ງຕັ້ງນາຍທະຫານໃຫ້ດຳລົງຕຳແໜ່ງຊົ່ວຄາວ**

ໃນກໍລະນີຮີບດ່ວນ ນາຍທະຫານທີ່ມີຕຳແໜ່ງແຕ່ຂັ້ນຫົວໜ້າກອງຮ້ອຍເອກະລາດ, ຫົວໜ້າກອງພັນນ້ອຍເອກະລາດ, ຫົວໜ້າກອງພັນໃຫຍ່ ຫລືທຽບເທົ່າຂຶ້ນໄປ ມີສິດປົດຕຳແໜ່ງຊົ່ວຄາວຂອງນາຍທະຫານທີ່ຂຶ້ນກັບຕົນທີ່ບໍ່ປະຕິບັດຄຳສັ່ງ ຊຶ່ງຈະກໍ່ຄວາມເສຍຫາຍໃຫ້ແກ່ກົມກອງ ແລະຜົນປະໂຫຍດຂອງຊາດ ແລ້ວແຕ່ງຕັ້ງຜູ້ໃໝ່ຂຶ້ນຮັບຜິດຊອບແທນ, ພ້ອມກັນນັ້ນ ກໍຕ້ອງລາຍງານໃຫ້ຂັ້ນເທິງຖັດຕົນຊາບ ແລະສະເໜີຂັ້ນເທິງແຕ່ງຕັ້ງເປັນທາງການຢ່າງຮີບດ່ວນ.

**ມາດຕາ 23. ການງົດຕຳແໜ່ງ ແລະການມອບຕຳແໜ່ງຕ່ຳກ່ວາຊັ້ນນາຍທະຫານ**

ການງົດຕຳແໜ່ງຂອງນາຍທະຫານຈະປະຕິບັດໄດ້ ໃນກໍລະນີລຸ່ມນີ້:

1. ກົງຈັກການຈັດຕັ້ງມີການປ່ຽນແປງ ຊຶ່ງບໍ່ຈຳເປັນຕ້ອງມີຕຳແໜ່ງທີ່ກ່ຽວຂ້ອງນັ້ນອີກ;
2. ນາຍທະຫານບໍ່ຄົບເງື່ອນໄຂທີ່ຈະຮັບຜິດຊອບຕຳແໜ່ງນັ້ນ;
3. ນາຍທະຫານທີ່ເຖິງອາຍຸກະສຽນ ຮັບເບ້ຍບຳນານ.

ນາຍທະຫານອາດຈະຖືກມອບຕຳແໜ່ງຕ່ຳກວ່າຊັ້ນ ໃນກໍລະນີລຸ່ມນີ້:

1. ມີການເພີ່ມທະວີການບັນຊາ ໃນການປະຕິບັດໜ້າທີ່ພິເສດ;
2. ມີການປ່ຽນແປງການຈັດຕັ້ງ ຂອງກົມກອງ;
3. ມີການສັບຊ້ອນໃສ່ຕຳແໜ່ງໃໝ່ທີ່ແທດເໝາະກັບຄວາມສາມາດ ແລະສຸຂະພາບ ຂອງ ນາຍທະຫານ.

## ໝວດທີ V
## ການຄຸ້ມຄອງຂອງລັດ ຕໍ່ນາຍທະຫານ

**ມາດຕາ 24. ການຄຸ້ມຄອງຂອງລັດຖະບານ ຕໍ່ນາຍທະຫານ**

**ລັດຖະບານຄຸ້ມຄອງນາຍທະຫານ ດັ່ງນີ້:**

1. ປະຕິບັດຫລັກການລວມສູນ ເປັນເອກະພາບໃນການກໍ່ສ້າງ ແລະຄຸ້ມຄອງຖັນແຖວນາຍທະຫານ;
2. ສະເໜີກົດໝາຍ ແລະອອກນິຕິກຳອື່ນໆ ກ່ຽວກັບນາຍທະຫານ;
3. ຊີ້ນຳ, ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະນິຕິກຳຕ່າງໆ ກ່ຽວກັບນາຍທະຫານ;
4. ສະໜອງງົບປະມານ, ປະກອບວັດຖຸ, ອຸປະກອນ, ພາຫະນະເຕັກນິກການທະຫານ;
5. ຄົ້ນຄວ້າ ແລະນຳໃຊ້ບັນດານະໂຍບາຍຕ່າງໆ ຕໍ່ຖັນແຖວນາຍທະຫານ.

**ມາດຕາ 25. ຄວາມຮັບຜິດຊອບ ຂອງກະຊວງປ້ອງກັນປະເທດ**

ກະຊວງປ້ອງກັນປະເທດ ມີຄວາມຮັບຜິດຊອບຕໍ່ລັດຖະບານ ກ່ຽວກັບການຄຸ້ມຄອງ, ບັນຊານາຍທະຫານ ດັ່ງນີ້:

1. ຄຸ້ມຄອງໂດຍກົງຢ່າງຮອບດ້ານຕໍ່ນາຍທະຫານ, ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ນະຄອນຫຼວງວຽງຈັນ, ນະຄອນ, ແຂວງ, ເມືອງ ແລະເທດສະບານ ເພື່ອຄຸ້ມຄອງນາຍທະຫານ ຕາມພາລະບົດບາດຂອງຕົນ;

2. ກຳນົດ, ຈັດຕັ້ງປະຕິບັດແຜນການກໍ່ສ້າງ ແລະບຳລຸງນາຍທະຫານ ໃຫ້ເປັນລະບົບ ຄົບຊຸດ, ຮັບປະກັນດ້ານປະລິມານ ແລະຄຸນນະພາບ;
3. ຊີ້ນຳ, ຕິດຕາມ, ກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະນິຕິກຳ ຂອງນາຍທະຫານ;
4. ຈັດຕັ້ງ, ນຳໃຊ້, ຄຸ້ມຄອງ, ປະຕິບັດນະໂຍບາຍ, ຍ້ອງຍໍ ແລະປະຕິບັດວິໄນ ຕໍ່ນາຍທະຫານ;
5. ສ້າງແຜນງົບປະມານ ແລະນຳໃຊ້ງົບປະມານ, ວັດຖຸ, ອຸປະກອນ, ພາຫະນະເຕັກນິກການທະຫານ;
6. ຊີ້ນຳ ນຳພາ ແລະບັນຊາ ນາຍທະຫານ ທັງສາມປະເພດກຳລັງ: ກຳລັງຫລວງ; ກຳລັງທ້ອງຖິ່ນ; ກອງຫລອນ ແລະກອງປ້ອງກັນຕົວ;
7. ພິຈາລະນາ, ແກ້ໄຂຄຳສະເໜີ, ຄຳຮ້ອງທຸກ ແລະຄຳຮ້ອງຟ້ອງຂອງນາຍທະຫານ;
8. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 26. ພັນທະຂອງບັນດາກະຊວງ ແລະອົງການຈັດຕັ້ງຕ່າງໆ

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສະຖາບັນການສຶກສາຂັ້ນຕ່າງໆ ມີພັນທະປະກອບສ່ວນ ດັ່ງນີ້:

1. ສຶກສາອົບຮົມ, ກໍ່ສ້າງ, ບຳລຸງ ແລະສະໜອງພະນັກງານວິຊາການໃຫ້ແກ່ກອງທັບ; ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ນາຍທະຫານເຮັດສຳເລັດໜ້າທີ່ຂອງຕົນ;
2. ຄົ້ນຄວ້າ, ສັບຊ້ອນນາຍທະຫານທີ່ຍົກຍ້າຍຈາກກອງທັບ ມາເຮັດໜ້າທີ່ຢູ່ຝ່າຍພົນລະເຮືອນຢ່າງເໝາະສົມ;
3. ຊ່ວຍເຫລືອເບິ່ງແຍງທາງດ້ານວັດຖຸ ຈິດໃຈ ແລະຊີວິດການເປັນຢູ່ຂອງນາຍທະຫານ ແລະຄອບຄົວ ເປັນຕົ້ນ ຄອບຄົວນາຍທະຫານຜູ້ເສຍສະຫລະຊີວິດ, ຜູ້ເສຍອົງຄະ, ພະນັກງານບຳນານ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະຄອບຄົວນາຍທະຫານທີ່ພວມປະຕິບັດໜ້າທີ່ພິເສດ, ຢູ່ເຂດທຸລະກັນດານ, ຫ່າງໄກສອກຫລີກ.

### ມາດຕາ 27. ພັນທະຂອງອົງການປົກຄອງທ້ອງຖິ່ນ

ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ມີພັນທະປະກອບສ່ວນດັ່ງນີ້:

1. ກໍ່ສ້າງ, ບຳລຸງຍົກລະດັບດ້ານການສຶກສາ ແລະວິຊາການອື່ນໆ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ນາຍທະຫານເຮັດສຳເລັດໜ້າທີ່;
2. ຄົ້ນຄວ້າ, ສັບຊ້ອນນາຍທະຫານທີ່ຍົກຍ້າຍຈາກກອງທັບ ມາເຮັດໜ້າທີ່ຢູ່ຝ່າຍພົນລະເຮືອນ ຢ່າງເໝາະສົມ;

3. ຊ່ວຍເຫລືອເບິ່ງແຍງທາງດ້ານວັດຖຸ ຈິດໃຈ ແລະຊີວິດການເປັນຢູ່ຂອງນາຍທະຫານ ແລະຄອບຄົວ ເປັນຕົ້ນ ຄອບຄົວນາຍທະຫານຜູ້ເສຍສະຫລະຊີວິດ, ຜູ້ເສຍອົງຄະ, ພະນັກງານບຳນານ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະຄອບຄົວນາຍທະຫານທີ່ພວມປະຕິບັດ ໜ້າທີ່ພິເສດ, ຢູ່ເຂດທຸລະກັນດານ, ຫ່າງໄກສອກຫລີກ.
4. ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆພ້ອມກັບປະຊາຊົນບັນດາເຜົ່າ ສຶກສາອົບຮົມ, ປະກອບຄວາມຄິດຄວາມເຫັນ, ຕຳນິຕິຊົມ, ຊ່ວຍເຫລືອນາຍທະຫານ ໃນການປະຕິບັດໜ້າທີ່ຢູ່ທ້ອງຖິ່ນຂອງຕົນ.

## ໝວດທີ VI
## ການປະຕິບັດນະໂຍບາຍ, ຂໍ້ຫ້າມ,
## ການຍ້ອງຍໍ ແລະການປະຕິບັດວິໄນ ຕໍ່ນາຍທະຫານ

**ມາດຕາ 28. ການປະຕິບັດນະໂຍບາຍ**

ການປະຕິບັດນະໂຍບາຍ ຕໍ່ນາຍທະຫານ ມີດັ່ງນີ້:

1. ນາຍທະຫານປະຈຳການຈະໄດ້ຮັບເງິນເດືອນ, ເງິນອຸດໜູນ, ເຄື່ອງອຸປະໂພກ ແລະບໍລິໂພກ ຕາມທີ່ລັດໄດ້ກຳນົດໄວ້. ສ່ວນນາຍທະຫານທີ່ເຊົາປະຈຳການ ແມ່ນຈະໄດ້ຮັບເງິນເບັຍບຳນານ ຫລືເງິນອຸດໜູນເທື່ອດຽວຕາມລະບຽບການ. ຍົກເວັ້ນກໍລະນີທີ່ໄດ້ກຳນົດໄວ້ໃນ ຂໍ້ 2 ແລະ ຂໍ້ 3 ມາດຕາ 31 ຂອງກົດໝາຍສະບັບນີ້;
2. ນາຍທະຫານທີ່ໄດ້ຮັບຫລາຍຕຳແໜ່ງ ຈະໄດ້ຮັບນະໂຍບາຍ ຕາມຕຳແໜ່ງສູງສຸດ;
3. ນາຍທະຫານທີ່ຖືກຍົກຍ້າຍໄປເຮັດວຽກຢູ່ກົມກອງໃໝ່ ແມ່ນຈະໄດ້ຮັບນະໂຍບາຍຕາມຕຳແໜ່ງໃໝ່;
4. ນາຍທະຫານທີ່ປະຈຳການ ຈະໄດ້ພັກຜ່ອນປະຈຳປີ ສິບຫ້າວັນ ຕາມລະບຽບກົດໝາຍ ຍົກເວັ້ນກໍລະນີທີ່ມີພາວະສຸກເສີນ ຫລືມີສົງຄາມ. ສ່ວນນາຍທະຫານທີ່ກຳລັງລາພັກຢູ່ນັ້ນ ຖ້າມີກໍລະນີພາວະສຸກເສີນ ຫລືມີສົງຄາມ ກໍໃຫ້ກັບຄືນມາກົມກອງດ່ວນ;
5. ນາຍທະຫານປະຈຳການ, ພະນັກງານບຳນານ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ແລະນາຍທະຫານເສຍອົງຄະ ຈະໄດ້ຮັບການເບິ່ງແຍງທາງດ້ານສຸຂະພາບ, ຖ້າມີການເຈັບເປັນຈະໄດ້ຮັບການປິ່ນປົວ ຕາມນະໂຍບາຍທີ່ພັກ-ລັດ ໄດ້ກຳນົດໄວ້. ສຳລັບນາຍທະຫານທີ່ມີການເຈັບເປັນ, ຖືກບາດເຈັບ ຫລືເສຍອົງຄະ ໃນເວລາປະຕິບັດໜ້າທີ່ຢູ່ສະໜາມຮົບ ຫລືຢູ່ເຂດຫຍຸ້ງຍາກທຸລະກັນດານ ຈະໄດ້ຮັບການປິ່ນປົວໂດຍບໍ່ເສຍຄ່າ;

6. ນາຍທະຫານ ຊຶ່ງເຮັດໜ້າທີ່ສູ້ຮົບ ແລະຮັບໃຊ້ຢູ່ສະໜາມຮົບຢ່າງພິລະອາດຫານ ຫລື ຖືກເສຍສະຫລະຊີວິດ ຈະໄດ້ຮັບການເລື່ອນຊັ້ນໃຫ້ຕື່ມໜຶ່ງຊັ້ນ ຫລືຂ້າມຊັ້ນ ຕາມຄວາມເໝາະສົມ, ຖ້າຖືກເສຍຊີວິດໃນເວລາຮັບໃຊ້ຢູ່ສະໜາມຮົບ ຈະໄດ້ເລື່ອນຕື່ມ ໜຶ່ງຊັ້ນ ;
7. ນາຍທະຫານແຕ່ຊັ້ນພັນເອກລົງມາທີ່ອອກຮັບເບ້ຍບຳນານ ຈະບໍ່ໄດ້ເລື່ອນຊັ້ນຕື່ມອີກ ແຕ່ຈະໄດ້ຍົກເງິນເດືອນຂຶ້ນໜຶ່ງຊັ້ນ;
8. ນາຍທະຫານບຳນານ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ຈະໄດ້ຮັບການເຊື້ອເຊີນເຂົ້າຮ່ວມໃນວັນບຸນສຳຄັນຕ່າງໆຂອງຊາດ ແລະມີສິດນຳໃຊ້ເຄື່ອງແບບນາຍທະຫານ, ເຄື່ອງໝາຍຍົດ, ໝາຍຊັ້ນ ຄືກັນກັບນາຍທະຫານປະຈຳການ;
9. ນາຍທະຫານ ຈະໄດ້ຮັບນະໂຍບາຍໄປສຶກສາຍົກລະດັບ ຢູ່ພາຍໃນ ແລະຕ່າງປະເທດ.

ສຳລັບນະໂຍບາຍລະອຽດຕໍ່ນາຍທະຫານປະຈຳການ, ພະນັກງານບຳນານ, ຜູ້ເສຍສະຫລະຊີວິດ, ຜູ້ເສຍຊີວິດ, ຜູ້ເສຍອົງຄະ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ; ຄອບຄົວພໍ່ແມ່ຂອງນາຍທະຫານ ທີ່ເສຍສະຫລະຊີວິດ, ເສຍຊີວິດ ແລະນະໂຍບາຍອື່ນໆ ແມ່ນລັດຖະບານເປັນຜູ້ກຳນົດ.

**ມາດຕາ 29. ຂໍ້ຫ້າມຕໍ່ນາຍທະຫານ**

ຂໍ້ຫ້າມຕົ້ນຕໍ ຕໍ່ນາຍທະຫານ ມີດັ່ງນີ້:

1. ຫ້າມລະເມີດລະບຽບກົດໝາຍຂອງລັດ, ກົດລະບຽບຂອງກອງທັບ ແລະຮີດຄອງປະເພນີ ອັນດີງາມຂອງປະຊາຊົນບັນດາເຜົ່າ;
2. ຫ້າມອອກຄຳສັ່ງ, ລະບຽບການ, ນະໂຍບາຍຕ່າງໆ ທີ່ຂັດກັບກົດໝາຍ, ຄຳສັ່ງ ຫລື ກົດລະບຽບທີ່ການຈັດຕັ້ງຂັ້ນເທິງວາງອອກ;
3. ຫ້າມປະລະໜ້າທີ່, ບໍ່ປະຕິບັດຕາມມະຕິຕົກລົງ ຫລືຄຳສັ່ງຂອງຂັ້ນເທິງ;
4. ຫ້າມໃຊ້ອຳນາດເກີນຂອບເຂດສິດ, ໜ້າທີ່ ແລະຄວາມຮັບຜິດຊອບຂອງຕົນ;
5. ຫ້າມສວຍໃຊ້ອຳນາດ, ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;
6. ຫ້າມເອົາອາວຸດ, ລູກກະສຸນ, ເຄື່ອງແບບທະຫານ ຫລືເອກະສານທາງການທະຫານໄປໃຫ້ຜູ້ອື່ນຢືມ ຫລືນຳໃຊ້ ໂດຍບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງ.

ນອກຈາກນີ້ແລ້ວ ນາຍທະຫານຕ້ອງປະຕິບັດຕາມຂໍ້ຫ້າມອື່ນໆທີ່ພັກ ແລະລັດໄດ້ກຳນົດໄວ້.

**ມາດຕາ 30. ການຍ້ອງຍໍຕໍ່ນາຍທະຫານ**

ນາຍທະຫານທີ່ມີຜົນງານດີເດັ່ນໃນການສູ້ຮົບ ຫລືການປະຕິບັດໜ້າທີ່ວຽກງານອື່ນໆ ຈະໄດ້ຮັບການຍ້ອງຍໍເຊັ່ນ: ນາມມະຍົດວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ຫລຽນໄຊ, ຫລຽນກາ, ໃບຍ້ອງຍໍຂັ້ນຕ່າງໆ, ການເລື່ອນຊັ້ນ ແລະນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 31. ການປະຕິບັດວິໄນຕໍ່ນາຍທະຫານ**

ນາຍທະຫານທີ່ໄດ້ລະເມີດກົດລະບຽບ, ວິໄນຂອງກອງທັບປະຊາຊົນລາວ ຈະຖືກປະຕິບັດວິໄນທາງບໍລິຫານ ຕາມສະຖານ ເບົາ ຫລືໜັກເຊັ່ນ: ຕໍານິ, ກ່າວເຕືອນ, ງົດການເລື່ອນຊັ້ນ, ຍົກຍ້າຍໜ້າທີ່, ປົດຕໍາແໜ່ງ, ປົດຊັ້ນ ແລ້ວໃຫ້ເງິນອຸດໜູນຕາມຊັ້ນທີ່ຍັງເຫລືອ ຫລືໄລ່ອອກຈາກກອງທັບໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ນາຍທະຫານ ທີ່ໄດ້ກະທໍາຜິດທາງອາຍາ, ກໍ່ຄວາມເສຍຫາຍແກ່ຜູ້ອື່ນ ຈະຖືກດໍາເນີນຄະດີຕາມກົດໝາຍ.

ນາຍທະຫານທີ່ໄດ້ກະທໍາຜິດໂດຍເຈດຕະນາ ແລະຖືກສານຕັດສິນລົງໂທດຕັດອິດສະຫລະພາບທີ່ໃຊ້ໄດ້ຢ່າງເດັດຂາດ ແຕ່ສິບແປດເດືອນຂຶ້ນໄປຈະໝົດສິດການເປັນທະຫານ. ໃນກໍລະນີການກະທໍາຜິດດ້ວຍຄວາມບໍ່ລະມັດລະວັງນັ້ນ ຈະພິຈາລະນາຊັ້ນຂອງນາຍທະຫານ ຕາມຄວາມເໝາະສົມ.

## ໝວດທີ VII
## ບົດບັນຍັດສຸດທ້າຍ.

**ມາດຕາ 32. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສປປລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 33. ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ເປັນຕົ້ນໄປ.

ທຸກຂໍ້ກໍານົດ, ບົດບັນຍັດທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ